G0101.10 T13/NoS.

...ARY COMMISSION OF IOWA
JUN 11 1976

# ຂ່າວສານຊາວໄທດຳ

# TAI DAM NEWSLETTER

Governor's Task Force for Indochinese Resettlement
523 E. 12th, Des Moines, Iowa 50319
Toll free 800.362.2780

May 27, 1976 | Number 10

NOTICE.

We have been requested by some Tai Dam parents to publicize the following message. We do so with pleasure because we think it is a good idea.

It illustrates the desire of the Tai Dam to assimilate fully into our Iowa and American culture, as well as an awareness that this will be accomplished more genuinely, completely and quickly by immersing the children into total American life, if even for a short period of time.

Further, it emphasizes once again that the future of us all rests with our children.

> "We have the pleasure to announce that many Tai Dam refugee families are wishing to send their children to American families during the next summer vacation. This will familiarize them with American life and most important, give them an opportunity to learn and practice English.

We would like to ask sponsors and other generous people to think about this suggestion for the summer. If necessary, we will share the cost of lodging. We would appreciate the answer to this appeal by getting in contact with us. Write:

Mr. Houng Baccam
The Governor's Task Force for Indochinese Resettlement
1000 E. Grand Avenue
Des Moines, Iowa 50319

Phone: 1-800-362-2780

In advance, we express our faithful thanks."

MINDING YOUR MONEY.

It is important to budget your money and put a certain amount in the bank. The bank will pay you interest. This allows your money to grow on amount.

The first thing to remember when budgeting your money is to live within your income. You see, your sponsors make a considerably larger income than you and are able to buy things you cannot afford. It took them many years of hard work to get where they presently are. You must do the same.

Do not spend your money as soon as you receive it. Instead, plan out your expenses and put the rest of the money in a bank. You will be surprised how quickly your money will multiply.

This is good advice because you never know when something unexpected will come up. If you have money in your bank account, you can take care of the problem. If not, you will be in serious trouble.

Do not rely on your sponsor for money in case of an emergency when you could have saved your own money instead.

Some of the expenses you should budget are:

Rent
Automobile
Food
Utilities
Insurance-(Auto, Life, Health)
Clothing
Taxes
Telephone
Medical

You should figure out how much your monthly expenses are. Then subtract this from your income. That extra money is what you should put in the bank. If you spend more than you earn, then you should review your expenditures to see how they may be reduced.

Ask your sponsor to help you prepare a budget. He or she will be glad to do it as they have done it before.

## THE AMERICAN WOMAN.

Unlike the women of many nations, the American woman is remarkably versatile, energetic and self-assured.

The typical American housewife and mother combines an extraordinary number of skills and roles both in and out of the home. In the home, she is a cook, laundress, fixer of gadgets, chauffeur, budget-keeper, diagnostician, first- aid expert, child-psychologist, hostess and more. Outside the home, she may be a lawyer, bank president, sportswoman, civilworker, politician or anything else she is trained to do.

Her great versatility has led her to believe that she deserves as much respect as her husband. She sonsiders herself the intellectual equal of her husband or any other man. You may feel that the American woman is too dependent but she wants the same respect as any man.

In the United States, it is not respectable to date someone when you are already married. A man dating 'behind his wife's back' is looked upon with scorn in America.

In Asia, this practice is acceptable but in America it is taboo! This is because in America, women are more respected than in Asia and they are not treated as mere possessions but as a human being, equal in every way to their husbands.

Remember, if you live in America, it is wise to live by the American customs. Treating women equal to men is one of these customs.

## FINANCIAL ASSISTANCE FOR BUILDING A HOME.

A credit rating of credit history is necessary if you plan to take out a mortgage (loan for a new home) for building a new dwelling. The Tai Dam are new in America and therefore have no credit rating.

The Department of Housing and Urban Developement (HUD) recognizes this problem and will insure your mortgage should you decide to build a home of your own.

What does this mean? Most banks will lend you 80% of the cost of building your own home. You must come up with the other 20% as a downpayment. HUD will insure your mortgage so you can get a 95% loan. This means you need only to put 5% (instead of 20%) downpayment.

The HUD assistance makes it considerably easier for the Tai Dam to receive a bank loan for a home.

For more information, contact:

The Department of Housing and Urban Development<br>
210 Walnut Street Room 259<br>
Des Moines, Iowa 50319

TRAVEL.

Americans love to travel and summer is their favorite time to travel. This is because of the warmer climate and the opportunity to take a break from work.

If you plan to vacation this summer, you have a variety of destinations and vacation spots from which to choose.

How large is the United States? California, on the west coast, is just one of our 50 states and it is twice the size of Laos or South Viet Nam. The distance from California (on the Pacific Ocean) to New York (on the Atlantic Ocean) is 3000 miles. The United States stretches 1600 miles from our northern border on Canada to our southern border on Mexico.

If you stop at night when driving accross America, it can take a week by automobile to cross the country. Along the way, you will find every kind of landscape- mountains, deserts, vast rolling plains, forrests, swamplands and rivers large and small.

America is so large that when it is 7:00 in the morning in California, it is already 10:00 am in New York. This is because there are 4 time zones in America. Iowa is in the Central time zone. Two of our states, Alaska and Hawaii, are not geographically connected to the continental United States. Because of their distance, the time difference is even greater.

The United States, being so large, has many different climates. Hawaii, Florida, and the southern states along the Gulf of Mexico have warm, almost tropical weather all year round. Southern California and the southwestern states have a warm desert climate. The northern states have four distinct seasons. They are cold in the winter and warm in the summer. If you plan to visit the mountain areas in the western

part of the United States, be prepared to drive in snow conditions, even in the summer.

Be sure to have your car checked by a mechanic before you leave on your vacation. Your car must be tuned differently if you plan to visit the desert as opposed to the mountains.

Be sure to aquire a road map so you will always know where you are. This is an enormous country and it is very easy to get lost. Road maps can be aquired at any gas station. Your sponsor should teach you how to use the map. This will insure that you get to your destination safely.

When driving on the highway, always keep an eye on your gas guage. You should never let your guage get below ¼ of a tank. When you reach this point, look for a gas station immediately. There is nothing more frightening and humiliating than running out of gas on a deserted road. You may be forced to walk miles for help.

If you have any others, ask your sponsor for help.

Vacationing is a great love of Americans because there are so many exciting places to see. You can join in on the fun if you go about it the right way.

## AMERICAN HOLIDAYS.

There are nine national holidays observed in the United States. These holidays are set forth to honor our democratic and Christian heritage. Government offices, schools, banks and most stores are closed and people usually celebrate with their family and friends. As can be seen on the list below, some holidays are oblerved on the same day each year and others vary.

There are also special holidays which are observed nationally, but do not include closing businesses and schools, such as Halloween, Mother's Day and Father's Day. The national holidays are:

New Years Day- January 1. This holiday begins the night before(New Years Eve) and commemorates entering into the new year.

Washington's Birthday- Third Monday in February. This holiday commemorates the birthday of George Washington, the first President of the United States.

Memorial Day- Last Monday in May. This day is dedicated to the memory of all our soldiers who have died during war.

Independence Day- July 4. This is the nation's birthday. This is the day our 'founding fathers' signed the Declaration of Independence declaring our independence from Great Britain.

Labor Day- First Monday in September. This day honors America's working men and women.

Columbus Day- Second Monday in October. This holiday honors Christopher Columbus, an Italian explorer, who discovered America in 1492.

Veterans Day- Fourth Monday in October. This day is set aside to honor all men and women who have served in the armed forces.

Thanksgiving Day- Fourth Thursday in November. On this day, we give thanks for all the good things we have in America.

Christmas Day- December 25. The birth of Christ is observed by the Christian community. People of the Jewish, Moslem and other faiths observe different religious holidays.

## ປະກາດ

ພໍ່ແມ່ຊາວໄທດຳໄດ້ຮ້ອງຂໍໃຫ້ພວກເຮົານຳເອົາເລື່ອງດັ່ງຕໍ່ລົງໄປນີ້ລົງໃນຂ່າວສານ ພວກເຮົາຍິນດີເອົາລົງຕາມຄຳຮ້ອງຂໍ ເພາະວ່າຄວາມຄິດດັ່ງກ່າວເປັນຄວາມຄິດທີ່ດີ.

ມັນເປັນສແດງເຖິງຄວາມປາຖນາຂອງຊາວໄທດຳທີ່ຈະໄດ້ແຊກຊືມເຂົ້າວັທນາທັມຂອງຊາວໄອໂອວາ ແລະຊາວອະເມຣິກັນ ພ້ອມທັງມີຄວາມເຊື່ອໝັ້ນວ່າການທີ່ເອົາເດັກເຂົ້າໄປຮ່ວມຢູ່ນຳຊີວິດອະເມຣິກັນໂດຍກົງນັ້ນເຖິງແມ່ນວ່າຈະເປັນຣະຍະເວລາອັນສັ້ນກໍຕາມ ແຕ່ວ່າກໍເປັນວິທີທີ່ເໝາະສົມ ແລະວ່ອງໄວ.

ນອກເໜືອໄປຈາກນັ້ນ ຄວາມນຶກຄິດດັ່ງກ່າວໄດ້ຢ້ຳເຖິງອານາຄົດຂອງຊາວໄທດຳ ແມ່ນຂື້ນຢູ່ກັບເດັກຂອງເຂົາເຈົ້າເອງ.

" ພວກເຮົາຮູ້ສຶກພູມໃຈຂໍແຈ້ງໃຫ້ທຸກໆຄົນຊາບວ່າຄອບຄົວຊາວໄທດຳຫລາຍໆຄອບຄົວມີຄວາມປາຖນາຢາກຈະສົ່ງເດັກຂອງເຂົາເຈົ້າເອງໄປຢູ່ນຳຄອບຄົວອະເມຣິກັນ ໃນເວລາພັກຮຽນຍາມຮ້ອນ. ທັງນີ້ກໍເພື່ອໃຫ້ເຂົາເຈົ້າໄດ້ມີໂອກາດລຶ້ງເຄີຍກັບຊີວິດອະເມຣິກັນ ແລະຍິ່ງໄປກວ່ານັ້ນຄືໃຫ້ໂອກາດເຂົາເຈົ້າໄດ້ຮ່ຳຮຽນ ແລະຝຶກແອບການເວົ້າພາສາອັງກິດ.

ສນັ້ນ ພວກເຮົາຈຶ່ງຢາກຮ້ອງຂໍມາຍັງຜູ້ຮັບຮອງ ແລະບຸກຄົນທີ່ມີຈິດໃຈເອື້ອເຟື້ອທັງຫລາຍຈົ່ງໄດ້ເອົາຄວາມແນະນຳນີ້ໄປຄິດແລະພິຈາຣະນາ ຖ້າເຫັນວ່າມີຄວາມຈຳເປັນ ພວກຂ້າພະເຈົ້າຍິນດີຂໍເສັຽຄ່າຢູ່ກິນສ່ວນ. ພວກຂ້າພະເຈົ້າຂໍສແດງຄວາມຮູ້ສຶກຂອບໃຈຕໍ່ຄຳຕອບໃນການຮ້ອງຂໍດັ່ງກ່າວນີ້ ໂດຍຕິດຕໍ່ມາຍັງພວກຂ້າພະເຈົ້າ - ຊຽງເຖິງ :

ທ່ານ Houng Baccam
The Governor's Task force for Indochinese Resettlement
1000 E. Grand Avenue
Des Moines , Iowa 50319
Phone : 1-800-362-2780

ພວກຂ້າພະເຈົ້າຂໍສແດງຄວາມຂອບອົກຂອບໃຈມາລ່ວງໜ້ານີ້ດ້ວຍ .

## ຄວາມເອົາໃຈໃສ່ເງິນຄຳເຈົ້າຂອງເອງ.

ເປັນເລື່ອງສຳຄັນຍິ່ງທີ່ຈະຕ້ອງງົປມານເງິນເຈົ້າຂອງເອງ ແລະຄວນເອົາຈຳນວນໃດຈຳນວນນຶ່ງເຂົ້າທະນາຄານໄວ້. ທາງທະນາຄານຈະໃຫ້ດອກເບັ້ຽແກ່ທ່ານຊຶ່ງມັນກໍເປັນວິທີທາງນຶ່ງທີ່ຈະໃຫ້ເງິນຂອງທ່ານໄດ້ອອກດອກອອກໝາກ.

ສິ່ງທີ່ແລກທີ່ຄວນຈົດຈຳເອົາໄວ້ ໃນການງົບປະມານເງິນຂອງພວກທ່ານ ກໍຄືການໃຊ້ຈ່າຍຂໍໃຫ້ຢູ່ໃນຂອບເຂດຂອງລາຍໄດ້ຂອງຕົນເອງ ພວກທ່ານອາດຈະຮູ້ເຫັນດ້ວຍຕົນເອງວ່າບັນດາຜູ້ຮັບຮອງພວກທ່ານປະກົດວ່າມີລາຍໄດ້ສູງກ່ວາພວກທ່ານ ແລະສາມາດຊື້ເຄື່ອງຂອງຫຼາຍສິ່ງຫຼາຍແນວທີ່ພວກທ່ານບໍ່ອາດສາມາດຊື້ໄດ້ ແຕ່ໃຫ້ຄິດວ່າ ເຂົາເຈົ້າເຄີຍໄດ້ເຮັດວຽກເຮັດການອັນໜັກໜາມາແລ້ວຫຼາຍເດືອນຫຼາຍປີຈົນໄດ້ເຖິງຂະໜາດນັ້ນ. ພວກທ່ານຈະຕ້ອງເຮັດເໝືອນກັນນັ້ນ .

ເງິນທີ່ພວກທ່ານຫາກໍໄດ້ຮັບມານັ້ນ ຂໍຢ່າໄດ້ຈັບຈ່າຍຈົນໃຫ້ໝົດໄປ ແຕ່ຂໍໃຫ້ພາກັນກະກຽມລາຍຈ່າຍເອົາໄວ້ແລະເອົາຈຳນວນທີ່ເຫຼືອນັ້ນເຂົ້າທະນາຄານໄວ້. ທ່ານອາດຈະມີຄວາມຕື່ນເຕັ້ນເອງວ່າ ເງິນຄຳຂອງພວກທ່ານຈະອອກໝາກອອກຜົນ .

ນີ້ຄືຄຳແນະນຳອັນດີ ເພາະວ່າພວກທ່ານບໍ່ສາມາດຮູ້ໄດ້ດອກວ່າຈະມີຫຍັງທີ່ບໍ່ຄາດຝັນເກີດຂຶ້ນມາ - ຖ້າພວກທ່ານມີເງິນຢູ່ໃນທະນາຄານ ແລ້ວທ່ານກໍຈະສາມາດແກ້ໄຂບັນຫານັ້ນໆໄດ້ ຖ້າທ່ານບໍ່ມີ ທ່ານອາດຈະພົບພໍ້ກັບບັນຫາຕ່າງໆນາໆໄດ້ .

ເມື່ອຍາມສຸກເສີນຕ້ອງການເງິນມາ ຂໍຢ່າໄດ້ຄາງຕໍ່ແຕ່ຜູ້ຮັບຮອງຂອງພວກທ່ານເລີຍ ແຕ່ທ່ານຄວນຈະຕ້ອງເກັບມ້ຽນເອົາເອງໄວ້ສະເໝີ .

ລາຍຈ່າຍທີ່ພວກທ່ານ ຄວນຈະງົບປະມານເອົາໄວ້ມີຄື :

- ຄ່າເຊົ່າ
- ຄ່າລົດຍົນ
- ຄ່າອາຫານ
- ຄ່ານ້ຳໄຟ - ກາສຕັ້ງໄຟ
- ຄ່າປະກັນໄພ (ລົດຍົນ, ຊີວິດ, ສຸຂະພາບ)
- ຄ່າເຄື່ອງນຸ່ງຫົ່ມ
- ຄ່າພາສີອາກອນຕ່າງໆ
- ຄ່າໂທຣະສັບ
- ຄ່າພະຍາບານ

ທ່ານຄວນຄຳນວນເອົາໄວ້ວ່າ ລາຍຈ່າຍປະຈຳເດືອນຂອງພວກທ່ານຈະເປັນເທົ່າໃດ ແລ້ວໃຫ້ເອົາມາລົບອອກຈາກລາຍໄດ້ຂອງທ່ານນັ້ນ ອັນທີ່ເຫຼືອນັ້ນທ່ານຄວນເອົາເກັບໄວ້ທີ່ທະນາຄານ . ຖ້າທ່ານຈັບຈ່າຍຫຼາຍກວ່າລາຍໄດ້ທ່ານຄວນຈະລື້ມຄືນ ເບິ່ງລາຍຈ່າຍຂອງທ່ານ ວ່າຈະສາມາດຕັດລົງດ້ວຍວິທີໃດໄດ້ .

ຂໍໃຫ້ຮ້ອງຂໍຜູ້ຮັບຮອງຂອງພວກທ່ານຊ່ວຍເຫຼືອໃນການຕຽມງົບປະມານຂອງທ່ານ ເຂົາເຈົ້າຄົງຈະຍິນດີຊ່ວຍພວກທ່ານໄດ້ເຊັ່ນທີ່ເຂົາເຈົ້າໄດ້ຊົດຊ່ວຍພວກທ່ານມາແລ້ວ .

## ບົງອະເມຣິກັນ .

ອາດຈະບໍ່ຄືກັນກັບບົງຫຼາຍໆປະເທດ, ບົງອະເມຣິກັນເປັນຄົນທີ່ສາມາດປະຕິບັດວັດການໄດ້ຫຼາຍໆ

ທາງ ເຂັ້ມແຂງ ແລະມີຄວາມ ເຊື່ອໝັ້ນຕົນເອງ.

ຊາວແມ່ເຮືອນ ອະເມຣິກັນຫຼືຜູ້ເປັນແມ່ ມີພາຣະໜ້າທີ່ ແລະຄວາມຊຳນິຊຳນານທັງຢູ່ໃນແລະນອກເຮືອນ. ພາຍໃນເຮືອນ ເຂົາຈະເປັນແມ່ຄົວ, ຄົນຊັກເຄື່ອງ, ຄົນຈ້ອມແຊມ ເຄື່ອງເລັກໆ ນ້ອຍໆ ໃນເຮືອນ, ຄົນຂັບຣົດ ຄົນກ່າກັບງົບປະມານ, ຜູ້ຊຳນິຊຳນານໃນການວິເຄາະພິຈາຣະນາ, ຜູ້ຊ່ຽວຊານໃນການ ພະຍາບານ ປັດຈຸບັນ, ນັກຈິຕວິທຍາເດັກນ້ອຍ, ເຈົ້າພາບ ແລະອື່ນໆ. ນອກບ້ານ ເຂົາອາດຈະເປັນທະນາຍຄວາມ, ປະທານທະນາຄານ, ນັກກິລາ, ຂ້າຣາຊການພົລເຮືອນ, ນັກການເມືອງ ຫຼືອື່ນໆ ຕາມທີ່ເຂົາຝຶກໂອບຮົມນັ້ນ.

ຄວາມສາມາດປະຕິບັດຈັດການໄດ້ຫຼາຍໆທາງ ຂອງເຂົານັ້ນເອງທີ່ທຳໃຫ້ເຂົາມີຄວາມເຊື່ອຖືວ່າເຂົາກໍເຊັ່ນດຽວກັນກັບ ສາມີຂອງເຂົາເອງທີ່ຈະຕ້ອງໄດ້ຮັບຄວາມນັບຖື ເຂົາຖືຕົນເອງວ່າເຂົາມີຄວາມສລຽວສລາດ ເທົ່າທຽມກັນກັບສາມີຂອງເຂົາ ແລະກັບຜູ້ຊາຍຜູ້ອື່ນໆ. ພວກທ່ານອາດຈະມີຄວາມຮູ້ສຶກວ່າຜູ້ຍິງອະເມຣິກັນເປັນຄົນທີ່ມີຄວາມອິສຣະພາບ ຫຼາຍທີ່ສຸດແຕ່ວ່າເຂົາຕ້ອງການ ຄວາມນັບຖືເຊັ່ນດຽວກັນກັບຜູ້ຊາຍ.

ໃນສະຫະຣັດອະເມຣິກາ, ຖ້າ ແຕ່ງງານກັນແລ້ວ ຍັງອອກໄປຫຼິ້ນນຳ ເພດອື່ນຢູ່ນັ້ນ ຖືວ່າ ເປັນການບໍ່ນັບຖືຊຶ່ງກັນແລະກັນ. ຜູ້ຊາຍອອກໄປຫຼິ້ນນຳ ຜູ້ຍິງອື່ນລັບຫຼັງພັລຍາຕົນເອງຈະຖືກດູຖູກ ແລະຢຽບຢ່ຳ.

ໃນ ອາຊີການປະພຶດແບບນີ້ອາດຈະບໍ່ເຜີດຕໍ່ສັງຄົມ ແຕ່ຢູ່ໃນສະຫະຣັດອະເມຣິກາ ຖືວ່າເປັນການ ຕ້ອງຫ້າມ. ທັງນີ້ກໍເພາະວ່າ ຢູ່ ໃນອະເມຣິກາ ຜູ້ຍິງເປັນທີ່ນັບຖືກວ່າ ຢູ່ ໃນອາຊີ, ແລະເຂົາເຈົ້າບໍ່ໄດ້ ຖືກ ຖືວ່າເປັນສິ່ງຂອງ ແຕ່ຖືວ່າເປັນມະນຸດ ດ້ວຍກັນ ທັງນັ້ນຊຶ່ງມີຄວາມສເມີພາບໃນແຕ່ລະດ້ານ ເຊັ່ນດຽວ ກັນກັບ ສາມີຂອງເຂົາເຈົ້ານັ້ນເອງ.

ໃຫ້ພາກັນຈົດຈຳເອົາໄວ້ຄືຖ້າພວກທ່ານຢູ່ໃນອະເມຣິກາ ພວກທ່ານກໍຄວນຈະປະຕິບັດຕາມເຄົາຣົບທຳນຽມ ອະເມຣິກັນຊຶ່ງການນັບຖືຜູ້ຍິງໃຫ້ເທົ່າທຽມກັນກັບຜູ້ຊາຍນັ້ນ ກໍຄືທຳນຽມອັນນຶ່ງ.

## ການຊ່ວຍເຫຼືອດ້ານການເງິນສຳລັບປຸກເຮືອນ

ປະວັດຂອງການມີສິນເຊື່ອເປັນສິ່ງຈຳເປັນຖ້າພວກທ່ານຫາກວາງແຜນຂໍຢືມເງິນເພື່ອປຸກເຮືອນໃໝ່ ຊາວໄທດຳພາກັນມາຢູ່ໃນອະເມຣິກາກໍບໍ່ເທົ່າໃດເທື່ອນັ້ນ ອາດຈະບໍ່ມີປະວັດຂອງການມີສິນເຊື່ອກັນເທື່ອ.

ທາງແຜນກຈັດຫາເຮືອນແລະພັທນາເມືອງ (HUD) ຫຼຽວເຫັນບັນຫາດັ່ງກ່າວນີ້ດີ ແລະຈະໃຫ້ອະນຸຍາດພິເສດໃນການໃຫ້ຢືມເງິນ ຖ້າທ່ານຫາກຕັດສິນຈະປຸກເຮືອນຕົນເອງຢູ່.

ການທີ່ເວົ້າເຊັ່ນນີ້ໝາຍຄວາມວ່າແນວໃດ? ທະນາຄານຫຼາຍໆແຫ່ງອາດຈະໃຫ້ທ່ານຢືມເງິນ ເພື່ອປຸກເຮືອນເຖິງ ໔໐% ຂອງຣາຄາທັງໝົດ ອີກ ໖໐% ທ່ານຈະຕ້ອງມີເພື່ອເປັນການລົງຕົ້ນທຶນ. ແຕ່ທາງແຜນກຈັດຫາເຮືອນແລະພັທນາເມືອງຈະສາມາດໃຫ້ທ່ານຢືມໄດ້ເຖິງ ໙໕% ຊຶ່ງໝາຍຄວາມວ່າ ຖ້າທ່ານມີ ໕% (ແທນທີ່ຈະແມ່ນ ໖໐%) ເປັນການຕົ້ນທຶນແລ້ວ ທ່ານກໍຈະສາມາດປຸກເຮືອນໃໝ່ໄດ້.

ການຊ່ວຍເຫຼືອຈາກພະແນກທາງເຮືອນແລະພັດທະນາເມືອງນັ້ນເປັນການຊ່ວຍຊາວໄທຄໍາໃຫ້ສາມາດຢືມເງິນ ຈາກທະນາຄານສໍາລັບປຸກເຮືອນໄດ້ງ່າຍຂື້ນເທົ່ານັ້ນ.

ເພື່ອລາຍລະອຽດກະລຸນາຕິດຕໍ່ກັບ :

Department of Housing and Urban Development
210 Walnut Street Room 259
Des Moines, Iowa 50319

## ການທ່ອງທ່ຽວ

ຊາວອະເມຣິກັນທັງຫຼາຍມັກພາກັນທ່ອງທ່ຽວ ແລະໃນຍາມຮ້ອນນັ້ນເອງເປັນຍາມທີ່ຄວນທ່ອງທ່ຽວທັງນີ້ ກໍເພາະວ່າເປັນຍ້ອນອາກາດອົບອຸ່ນ ແລະທັງເປັນໂອກາດໃນການທີ່ພັກຜ່ອນອີກດ້ວຍ.

ຖ້າພວກທ່ານມີແຜນຈະໄປທ່ຽວຫຼີ້ນພັກຜ່ອນຍາມຮ້ອນປີນີ້ທ່ານອາດຈະມີຫຼາຍໆບ່ອນ ແລະສະຖານທີ່ໆຈະ ເລືອກ. ສະຫະລັດອະເມຣິກາກວ້າງໃຫຍ່ປານໃດ? ລັດຄາລີຟໍເນັຽ ທີ່ຕັ້ງຢູ່ທາງຝັ່ງຕາເວັນຕົກຍຽງແຕ່ເປັນລັດ ນຶ່ງເທົ່ານັ້ນ ໃນຈຳນວນ ໕໐ ລັດຊຶ່ງກວ້າງໃຫຍ່ປະມານສອງເທົ່າຂອງປະເທດລາວຫຼືປະເທດວຽດນາມ. ຣະຍະ ທາງແຕ່ລັດຄາລີຟໍເນັຽ (ທີ່ຕິດກັບມະຫາສມຸດປາຊີຟິກ) ຫາລັດນິວຢອກ (ທີ່ຕິດກັບມະຫາສມຸດອັດລັງຕິກ) ໄກ ໓໐໐໐ ໄມ ແລະແຕ່ຊາຍແດນການາດາທາງເໜືອລົງສູ່ຊາຍແດນເມັກຊີໂກທາງດ້ານໃຕ້ໄກ ໑໓໐໐ ໄມ.

ໃນການໃຊ້ທາງຣົດຍົນຂັບຜ່ານສະຫະລັດອະເມຣິກາ ຖ້າພວກທ່ານຫາກມີການຈອດພັກຜ່ອນໃນຍາມ ກາງຄືນອາດກິນເວລາເຖິງອາທິດ. ຕາມເສັ້ນທາງພວກທ່ານອາດຈະພົບພໍ້ທິວທັດພູເຂົາ ທະເລຊາຍ ຮ່ອມ ເຂົາ ປ່າໄມ້ ໜອງບຶງ ແລະແມ່ນ້ຳນ້ອຍແລະໃຫຍ່ຕ່າງໆ.

ອະເມຣິກາກວ້າງໃຫຍ່ທີ່ສຸດ ເວລາ ໗ ໂມງເຊົ້າຢູ່ຄາລີຟໍເນັຽຈະເປັນ ໑໐ ໂມງຢູ່ລັດນິວຢອກ ທັງນີ້ກໍເພາະ ວ່າໃນສະຫະລັດອະເມຣິກາໄດ້ແບ່ງອອກເປັນ ໔ ເຂດເວລາ. ລັດໄອໂອວາຕົກຢູ່ໃນເຂດເວລາພາກກາງ. ສອງລັດຄືລັດຮາວາຍ ແລະລັດອາລາສກາບໍ່ໄດ້ຕິດກັບແຜ່ນດິນໃຫຍ່ສະຫະລັດອະເມຣິກາ ເນື່ອງຈາກຣະຍະທາງ ຄວາມແຕກຕ່າງເວລາຈຶ່ງມີຫຼາຍກ່ອນ

ສະຫະລັດອະເມຣິກາ ເນື່ອງຈາກມີພູມລຳເນົາອັນກວ້າງໃຫຍ່ຈຶ່ງມີອາກາດແຕກຕ່າງກັນແຕ່ລະແຫ່ງ ລັດຮາວາຍ, ລັດຟລໍຣິດາ ແລະຈຳພວກລັດທີ່ຢູ່ທາງພາກໃຕ້ຕາມອ່າວເມັກຊີໂກ ມີອາກາດອົບອຸ່ນດີຕລອດປີ ເກືອບເໝືອນກັບອາກາດທາງເຂດຮ້ອນ. ເຂດພາກໃຕ້ຂອງລັດຄາລີຟໍເນັຽ ແລະຈຳພວກລັດທາງພາກໃຕ້ມີ ອາກາດອົບອຸ່ນແຫ້ງແລ້ງ. ທາງຈຳພວກລັດທາງເຂດເໜືອມີຣະດູ ໔ ຣະດູດ້ວຍກັນ. ອາກາດໜາວໃນຍາມ ໜາວ ແລະອົບອຸ່ນໃນຍາມຮ້ອນ. ຖ້າວ່າພວກທ່ານຫາກຈະຢ້ຽມຢາມເຂດພູເຂົາທາງພາກຕາເວັນຕົກຂອງ ສະຫະລັດອະເມຣິກາ ຂໍໃຫ້ພາກັນຕຽມໄວ້ສຳລັບຫິມະ ເຖິງວ່າຈະເປັນຣະດູຮ້ອນກໍຕາມ.

ກ່ອນພວກທ່ານຈະອອກເດີນທາງໄປທ່ອງທ່ຽວນັ້ນ ຂໍຢ່າໄດ້ລືມເອົາຣົດຂອງທ່ານນັ້ນໄປກວດໂດຍຊ່າງໃຫ້ຮຽບຮ້ອຍເສັຽກ່ອນ. ຣົດຂອງທ່ານຈະຕ້ອງກຶກປັບເຄື່ອງຈັກໃຫ້ແຕກຕ່າງກັນລະຫວ່າງຈະໄປເຂດທະເລຊາຍແລະເຂດພູເຂົາ. ຂໍໃຫ້ພາກັນເອົາແຜນທີ່ຫົນທາງຕິດໄປພ້ອມ ເພື່ອທ່ານຈະຮູ້ວ່າທ່ານຕົກຢູ່ເຂດໃດ. ສະຫະຣັດເປັນປະເທດທີ່ກວ້າງໃຫຍ່ຫລາຍ ແລະເຮັດໃຫ້ຫລົງໄດ້ງ່າຍທີ່ສຸດ ແຜນທີ່ຫົນທາງດັ່ງກ່າວຂໍໄດ້ທີ່ທຸກໆປ້ອມນ້ຳມັນ ຜູ້ຮັບຮອງຂອງທ່ານອາດຈະຊ່ອຍທ່ານໄດ້ດີໃນການເບິ່ງແຜນທີ່ຊຶ່ງອາດຈະເປັນແນວທາງທີ່ໃຫ້ຄວາມໝັ້ນໃຈແກ່ທ່ານໄດ້ໃນການໄປເຖິງຈຸດທີ່ທ່ານກະເອົາໄວ້ດ້ວຍຄວາມປອດພັຍ.

ໃນຍາມທີ່ຂັບຢູ່ໃນຍົນກຸພົນນັ້ນ ຂໍໃຫ້ເບິ່ງເຂັມໝາຍນ້ຳມັນຣົດຢູ່ເລື້ອຍໆ ທ່ານບໍ່ຄວນຈະໃຫ້ເຂັມນັ້ນລົງຫລຸດເຖິງ 1/4 ຂອງຖັງນ້ຳມັນ ເມື່ອທ່ານເຫັນເຂັມນັ້ນລົງເຖິງຈຸດດັ່ງກ່າວແລ້ວ ຄວນຊອກຫາປ້ອມນ້ຳມັນທັນທີໂລດ. ບໍ່ມີສິ່ງໃດທີ່ເປັນຕາໜ້າຢ້ານກົວ ແລະໜ້າອັບອາຍຂາຍໜ້າເທົ່າກັບການໝົດນ້ຳມັນຢູ່ໃນບ່ອນທີ່ຄົນບໍ່ທ່ອງທ່ຽວ ທ່ານອາດຈະໄດ້ຍ່າງໄກພໍສົມຄວນໃນການຂໍຄວາມຊ່ອຍເຫລືອ.

ຖ້າທ່ານມີເຣື່ອງອື່ນໆ ແລ້ວຂໍໃຫ້ຖາມກັບຜູ້ຮັບຮອງຂອງພວກທ່ານອີກ.

ການທ່ອງທ່ຽວເປັນການພັກຮັກອັນສຳຄັນຂອງຊາວອະເມຣິກັນ ເພາະວ່າມີຫລາຍໆບ່ອນໜ້າຕື່ນເຕັ້ນເປັນໜ້າເບິ່ງໜ້າຢ້ຽມຢາມ ທ່ານອາດສາມາດພົບພໍ້ກັບຄວາມມ່ວນຊື່ນຖ້າພວກທ່ານໄປກຶກບ່ອນ.

## ວັນພັກຂອງຊາວອະເມຣິກັນ.

ໃນສະຫະຣັດອະເມຣິກາມີວັນພັກຂອງຊາດນຳກັນຢູ່ທັງໝົດເກົ້າວັນ. ວັນພັກດັ່ງກ່າວນີ້ຈັດໃຫ້ມີຂຶ້ນເພື່ອເປັນກຽດເຖິງມໍຣະດົກທາງດ້ານຄວາມເປັນປະຊາທິປະໄຕ ແລະທາງດ້ານສາສນາກຣິສຕຽນຂອງປະເທດເຮົາ ພະແນກຣາຊການຕ່າງໆ ໂຮງຮຽນ ທະນາຄານ ແລະຫ້າງຮ້ານສ່ວນຫລາຍພາກັນປຸດເຮັດການ ແລະປະຊາຊົນທົ່ວໄປສ່ວນຫລາຍກໍພາກັນສເລີມສລອງຮ່ວມກັນກັບຄອບຄົວແລະໝູ່ເພື່ອນ. ເໝືອນຈະເຫັນຕາມບັນຊີຂ້າງລຸ່ມນີ້ ວັນພັກບາງວັນກົງກັບໃນວັນດຽວກັນຂອງແຕ່ລະປີ ແລະບາງວັນກໍຕ່າງ.

ມີວັນພັກພິເສດບາງວັນອີກຫລາຍວັນທີ່ມີການສເລີມສລອງກັນທົ່ວປະເທດ ແຕ່ວ່າບໍ່ມີການປິດຮ້ານຄ້າແລະໂຮງຮຽນ ເຊັ່ນ ວັນຮາໂລວີນ ວັນຜູ້ເປັນແມ່ ແລະວັນຜູ້ເປັນພໍ່ເປັນຕົ້ນ.
ວັນພັກຂອງຊາດມີດັ່ງນີ້:

<u>ວັນປີໃໝ່</u> - ວັນທີ ໑ ມະກະຣາ. ວັນດັ່ງກ່າວນີ້ເລີ່ມຕົ້ນໃນຄືນຂອງວັນປີໃໝ່

<u>ວັນເກີດຂອງວໍຊິງຕັນ</u> - ວັນຈັນທີສາມຂອງເດືອນກຸມພາ. ວັນພັກດັ່ງກ່າວນີ້ເປັນວັນສລອງວັນທີ່

ລະລຶກວັນເກີດຂອງ ຈອດ ວໍຊິງຕັນ, ປະທານາທິບໍດີຄົນທໍາອິດຂອງສະຫະລັດອະເມຣິກາ.

<u>ວັນໄຫວ້ອາລັຍ</u> - ວັນຈັນສຸດທ້າຍຂອງເດືອນພຶດສະພາ (ເມ). ວັນດັ່ງກ່າວໄດ້ສຖາປະນາຂຶ້ນເພື່ອໄຫວ້ອາລັຍເຖິງທະຫານທີ່ໄດ້ເສັຽຊີວິດໄປໃນປາງສົງຄາມ.

<u>ວັນເອກະລາດ</u> - ວັນທີ ໔ ກໍຣະກະດາ (ຈຸຍເຢ) - ວັນດັ່ງກ່າວຄືວັນແຫ່ງການເປັນປະເທດຈຶ່ງເປັນວັນທີ່ປູ່ຍ່າຕາຍາຍຂອງພວກເຮົາໄດ້ເຊັນຮັບເອົາເອກະລາດແລະສຖາປະນາຕົນເອງເປັນເອກະລາດຈາກປະເທດອັງກິດ.

<u>ວັນກັມມະກອນ</u> - ວັນຈັນທີ່ແລກຂອງເດືອນກັນຍາ (ເຊບຕາມ) - ວັນດັ່ງກ່າວຄືເປັນວັນໃຫ້ກຽດແກ່ຊາວກັມມະກອນທັງຍິງແລະຊາຍຂອງຊາວອະເມຣິກັນ.

<u>ວັນຂອງໂຄລັມເບີສ</u> - ວັນທີ່ສອງເດືອນຕຸລາ (ອັອກໂຕບ) - ວັນພັກດັ່ງກ່າວເປັນວັນເພື່ອເປັນກຽດແກ່ກຣິສຕັບເຟີ ໂຄລັມເບີສ, ນັກສໍາຣວດຊາວອີຕາລີຜູ້ທີ່ຄົ້ນພົບອະເມຣິກາປີ ໑໔໙໒.

<u>ວັນນັກຮົບເກົ່າ</u> - ວັນຈັນທີ່ສີ່ຂອງເດືອນຕຸລາ (ອັອກໂຕບ) - ວັນດັ່ງກ່າວມີຂຶ້ນເພື່ອໃຫ້ກຽດແກ່ບຸກຄົນຍິງແລະຊາຍຜູ້ທີ່ໄດ້ຮັບໃຊ້ໃນກອງທັບມາແລ້ວ.

<u>ວັນຂອບພຣະຄຸນຜູ້ເປັນເຈົ້າ</u> - ວັນພະຫັດສຸດທ້າຍຂອງເດືອນພຶດສະຈິກາ (ໂນວາມ) - ໃນວັນດັ່ງກ່າວພວກເຮົາໄດ້ຂອບອົກຂອບໃຈຕໍ່ສິ່ງຈົບສິ່ງດີທີ່ພວກເຮົາໄດ້ຮັບໃນອະເມຣິກາ.

<u>ວັນຄຣິສມາດ</u> - ວັນທີ ໒໕ ເດືອນທັນວາ (ເດຊາມ) - ຊາວຄຣິສຕຽນທັງຫຼາຍມີການສະເລີມສລອງວັນເກີດຂອງພຣະເຈົ້າຄຣິສ - ບຸກຄົນທີ່ເຂົ້າສາສນາອື່ນ ຢູ່ວິສ, ມຶສລາມ ແລະອື່ນໆ ກໍ່ສເລີມສລອງວັນຂອງເຂົາເຈົ້າຕ່າງຫາກ.

GOVERNOR'S TASK FORCE
FOR INDOCHINESE RESETTLEMENT
1000 EAST GRAND
DES MOINES, IOWA 50319

Bulk Rate
U.S. Postage Paid
Des Moines, Ia.
Permit No. 1195

State Library
Historical Bldg.
Des Moines, Iowa 50319